ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຜ-ຟຟລ ຮ່ວມມອບເງິນເພື່ອການບູລະນະສ້ອມແປງ ໂຮງຮຽນປະຖົມ ເຂື່ອນໄຟຟ້າແຊລະບໍາ

ໃນວັນທີ 19 ກັນຍາ 2019 ທີ່ເຂື່ອນໄຟຟ້າແຊລະບໍາ ໄດ້ມີພິທີມອບ-ຮັບເງິນອຸປະຖໍາ ບູລະນະສ້ອມແປງ ໂຮງຮຽນປະຖົມເຂື່ອນໄຟຟ້າແຊລະບໍາ ແລະ ເຄື່ອງອຸປະໂພກບໍລິໂພກ ລວມມູນຄ່າ 140 ລ້ານກີບ ໃຫ້ກັບໂຮງຮຽນປະຖົມເຂື່ອນໄຟຟ້າແຊລະບໍາ ພ້ອມທັງຄອບຄົວທີ່ອາໄສຢູ່ອ້ອມຂ້າງເຂື່ອນທີ່ໄດ້ຮັບຜົນກະທົບ ທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມທາງພາກໃຕ້ ໃນເດືອນ ກັນຍານີ້ ເຊິ່ງເງິນອຸປະຖໍາດັ່ງກ່າວແມ່ນໄດ້ຮັບການສືບທົບຈາກ ກະຊວງພະລັງງານ ແລະ ບໍ່ແຮ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດ ເອກະຊົນ.

ໃນພິທີ ມອບ-ຮັບ ດັ່ງກ່າວ ໃຫ້ກຽດຕາງໜ້າມອບໂດຍ ທ່ານ ປອ ບຸນທອງ ຈິດມະນີ ຮອງນາຍົກລັດຖະມົນຕີ ແຫ່ງ ສປປລາວ ແລະ ຕາງໜ້າຮັບໂດຍ ທ່ານ ສອນສະຫວັນ ສີວິໄລ ເຈົ້າເມືອງ ເມືອງຊະນະສົມບູນ ແຂວງຈໍາປາສັກ ໃນພິທີດັ່ງກ່າວໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ປອ ຄໍາມະນີ ອິນທິລາດ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່, ປະທານສະພາບໍລິຫານ ຂອງ ຜ-ຟຟລ, ທ່ານ ປອ ບຸນຖອງ ດີວິໄຊ ເຈົ້າແຂວງແຂວງຈໍາປາສັກ, ທ່ານ ນ. ລັດຕະນາ ປະທຸມວັນ ຜູ້ອໍານວຍໃຫຍ່ ຜ-ຟຟລ ແລະ ທ່ານ ຄໍາປະເສີດ ເທບປັນຍາ ຮອງຜູ້ອໍານວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ ພ້ອມດ້ວຍຄະນະ

ນອກຈາກນັ້ນ ທ່ານ ຮອງນາຍົກລັດຖະມົນຕີ ພ້ອມດ້ວຍຄະນະ ຍັງໄດ້ລົງຢ້ຽມຢາມເຂື່ອນ ແລະ ໂອ້ລົມກັບຊາວບ້ານທີ່ໄດ້ຮັບຜົນກະທົບຈາກໄພພິບັດດັ່ງກ່າວ ເພື່ອແບ່ງເບົາຄວາມທຸກໂສກຈາກເຫດການທີ່ເກີດຂຶ້ນ.









ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la